# ບົດລາຍງານ

## ການຝຶກອົບຮົມກ່ຽວກັບຕ່ອງໂສ້ການຕະຫຼາດເຄື່ອງປ່າຂອງດົງ

## (ແຂມ, ປໍສາ ) 4ບ້ານ, ຫ້ວຍມັນ, ນ້ຳບໍ່, ທ່າໂພ,ຫ້ວຍໂນະ ທີ່ເມືອງໂພນໄຊ ແຂວງ ຫຼວງພະບາງ





ກໍລະກົດ , 2007

พาภสะเໜີ

ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ເປັນປະເທດໜຶ່ງ ທີ່ຕັ້ງຢູ່ໃນພາກພື້ນ ຕາເວັນອອກສ່ຽງໃຕ້ ແລະ ມີຄວາມອຸດົມສົມບູນໄປດ້ວຍຊີວະນາໆພັນຂອງຜະລິດຕະພັນໄມ້ ແລະ ເຄື່ອງປ່າຂອງດົງ, ອັດຕາການປົກຫຸ້ມຂອງປ່າໄມ້ກໍ່ມີຫຼາຍພໍສົມຄວນໃນຂະນະດຽວກັນຊັບພະຍາກອນປ່າໄມ້ກໍ່ໄດ້ຖືກທໍາລາຍຍ້ອນວິທີການຂຸດຄົ້ນແບບບໍ່ເປັນລະບົບ, ບໍ່ມີການຈັດສັນແບບຍືນຍົງ ແລະ ຖາງປ່າເຮັດໄຮ່ແບບເລື່ອນລອຍ, ການບຸກເບີກປ່າເພື່ອຂະຫຍາຍເນື້ອທີ່ດິນກະສິກໍາ ແລະ ຕະຫຼອດຮອດການພັດທະນາກິດຈະກໍາກໍ່ສ້າງໂຄງຮ່າງພື້ນຖານຕ່າງໆ, ປ່າໄມ້ ແລະ ເຄື່ອງປ່າຂອງດົງເປັນແຫຼ່ງອາຫານໜຶ່ງທີ່ມີຄວາມສໍາຄັນສໍາລັບການດໍາລົງຊີວິດຂອງປະຊາຊົນລາວບັນດາເຜົ່າຈາກການຄາດຄະເນຜະລິດຕະພັນເຄື່ອງປ່າຂອງດົງທີ່ເປັນອາຫານມີເຖິງ 60-79% ທີ່ບໍ່ແມ່ນເຂົ້າກິນໃນຈໍານວນນໍ້າໜັກອາຫານບໍລິໂພກທັງໝົດ. ໄມ້, ໄມ້ປ່ອງ, ຫວາຍ ໄດ້ຖືກນໍາໃຊ້ເຂົ້າໃນການ ປຸກສ້າງເຮືອນຊານ ,ເຄື່ອງມືໃຊ້ສອຍໃນການຜະລິດກະສິກໍາ ແລະ ອຸປະກອນໃນການລ່າສັດ ແລະ ໃຊ້ເປັນຢາພື້ນເມືອງ ອື່ນໆ.

ແຂມ (Thysanolaena maxima (Roxb.) O. **Ktze**) ແລະ ປໍສາ (Broussonetia papyrifera (L.) Vent.) ເປັນເຄື່ອງປ່າຂອງດົງຊະນິດໜຶ່ງທີ່ມີຄວາມສໍາຄັນຕໍ່ກັບການດໍາລົງຊີວິດຂອງປະຊາຊົນໃນເຂດຊົນນະບົດເພາະມັນສາມາດສ້າງລາຍຮັບໃຫ້ແກ່ຄອບຄົວເປັນຕົ້ນແມ່ນຄອບຄອບທຸກຈົນເຫັນວ່າມີບົດບາດສໍາຄັນຫຼາຍ,ຍ້ອນບໍ່ມີເນື້ອທີ່ທໍາການຜະລິດ ຈຶ່ງຖືເອົາການເກັບເຄື່ອງປ່າຂອງດົງ (ແຂມ,ປໍສາ) ມາຂາຍ ເປັນອາຊີບຫຼັກ

## I. ລັກສະນະທາງດ້ານພືດສາດຂອງແຂມ ແລະ ປໍສາ

**ແຂມ (*Thysanolaena maxima* (Roxb.) O. Ktze.):**

- ແຂມ ສ່ວນຫຼາຍເກີດຕາມປ່າເລົ່າເຂດດິນຄ້ອຍຊັນກະແຈກກະຈາຍ ສາມາດຂະຫຍາຍພັນດ້ວຍ ເຫງົ້າ , ພາຍຫຼັງທີ່ປູກໄດ້ 1 ປີ ກໍ່ສາມາດເກັບກູ້ໄດ້ , ການເກັບກູ້ ສ່ວນຫຼາຍ ປະຊາຊົນຈະເກັບກູ້ ຊ່ວງເດືອນ 2- 4 (ສາກົນ) ຂອງທຸກໆປີ .
- ແຂມ ແມ່ນເກີດເປັນສູມ ແລະ ອອກໜໍ່ ຄ້າຍຄື ໜໍ່ໄມ້ປ່ອງ ທົ່ວໄປ ແຕ່ມີຂະໜາດນ້ອຍກວ່າ , ຄວາມກ້ວາງຂອງສູມ ປະມານ 1-1.5 ແມັດ , ຖ້າສູງເຕັມທີ່ປະມານ 2.5 - 4 ແມັດ ເມື່ອທໍາການເກັບກູ້ ແລະ ຕັດ ແລ້ວ ແຂມກໍ່ຈະໝູນວຽນເກີດຂື້ນອີກ ຕາມລະດູຂອງມັນເອງ.
- **ລໍາຕົ້ນ:** ຂອງແຂມແມ່ນມີກາບຂອງໃບຫຸ້ມລໍາຕົ້ນແຕ່ຄໍຮາກຈົນເຖິງປາຍຍອດ ໂດຍເປັນແຕ່ລະຂັ້ນຂອງກ້ານໃບໄລຍະຫ່າງຂອງກ້ານໃບແມ່ນ 12 ຊັງຕີແມັດ ແລະ ມີຂົນອ່ອນ ສີເຫຼືອງແກມຂາວປົກຫຸ້ມລໍາຕົ້ນ, ລໍາເປັນສີຂຽວແກ່ ຄວາມສູງຂອງລໍາ ແມ່ນ 2.5-3 ແມັດ
- **ໃບ** : ເປັນສີຂຽວແກ່ຄືກັບລໍາຕົ້ນ ,ມີຮູບຮ່າງລັກສະນະຄືມີດແຫຼມ ,ລວງກ້ວາງມີປະມານ

7 ຊັງຕີແມັດ, ລວງຍາວຂອງໃບປະມານ 65 ຊັງຕີແມັດ, ໜ້າໃບເປັນສີຂຽວເຫຼື້ອມ, ກ້ອງ ໃບຂຽວມົ່ນໜ້າໃບ ແລະ ຫຼັງໃບມີລັກຊະນະເປັນເສັ້ນນ້ອຍໆຂະໜານກັບ ເສັ້ນກາງໃບແຕ່ກົກໃບຈົນ ຮອດປາຍຍອດ ສາມາດເຫັນໄດ້ຢ່າງຈະແຈ້ງ

- **ດອກ**:ເປັນຊໍ່ດອກທີ່ແຂງ ດອກເປັນສີຂຽວມົ່ນ ແລະ ມີກ້ານດອກຍາວປະມານ 80 ຫາ 100 ຊັງຕີແມັດ, ເລີ່ມອອກດອກ ຊ່ວງເດືອນ 11 - 12 , ເກັບກູ້ ເດືອນ 3 - 4 ຂອງທຸກປີ.
- ເນື້ອທີ່ທຳການຜະລິດແຂມແມ່ນບໍ່ພຽງພໍເພາະເນື້ອທີ່ສ່ວນຫຼາຍແມ່ນໄດ້ຖືກນຳໃຊ້ເຂົ້າໃນການຜະລິດກະສິກຳ ການປູກເຂົ້າ, ໝາກເດືອຍ,ສາລີ,ໝາກງາ ແລະ ອື່ນໆ
- ການເກັບກູ້ສ່ວນຫຼາຍປະຊາຊົນ ແມ່ນນຳໃຊ້ ເຊັ່ນ: ພ້າ,ມີດ,ກ່ຽວ ເພື່ອຕັດ ແລະເກາະເອົາ, ຈາກນັ້ນນຳມາຕາກແດດ 1-2 ມື້ ແລ້ວຟາດ, ລິກິ່ງງ່າສ່ວນທີ່ບໍ່ຕ້ອງການ ອອ ກ ໃຫ້ໝົດ , ເຮັດເປັນມັດຊັ່ງຂາຍເປັນກິໂລໄດ້ເລີຍ, ການປຸງແຕ່ງສ່ວນຫຼາຍປະຊາຊົນແມ່ນນຳມາເຮັດ

  ຟອຍກວດ ແລະ ເຮັດຕັ່ງນັ່ງເທົ່ານັ້ນ ຍັງບໍ່ທັນມີເຕັກນິກໃນການ ປຸງແຕ່ງ ເຮັດຢ່າງອື່ນ.
- ແຮງງານບໍ່ພຽງພໍສາຍເຫດຍ້ອນໄລຍະຂອງການເກັບກູ້ແມ່ນສັ້ນແລະຖືກຊ່ວງ ກະກຽມດິນເພື່ອທຳການຜະລິດຂອງຄອບຄົວ ການໄປເອົາແຂມແມ່ນຍາດເວລາຂອງການຜະລິດ.
- ແຂມ ແມ່ນມີຄວາມສຳຄັນກ່ຽວ ກັບຊີວິດການເປັນຢູ່ຂອງປະຊາຊົນເພາະວ່າແຂມແມ່ນໄດ້ຖືກນຳໃຊ້ຫຼາຍພາກສ່ວນ ເຂົ້າໃນ ຊີວິດປະຈຳວັນ ເຊັ່ນ: ໜໍ່ ສາມາດກິນເປັນອາ ຫານໄດ້ , ດອກ ແລະ ກ້ານ ແມ່ນນຳມາເຮັດຟອຍກວດ , ຕັ່ງນັ່ງໃນເຮືອນນອກຈາກນີ້ ດອກແຂມແມ່ນເປັນວັດຖຸດິບທີ່ສຳຄັນໃນການສົ່ງອອກຂາຍໄປຕ່າງປະເທດ ແລະ ທັງເປັນການສ້າງລາຍຮັບເສີມເຂົ້າໃນການດຳລົງຊີວິດຂອງປະຊາຊົນໃນເຂດ ຊົນນະບົດ
- ບັນຫາແຂມ: ມີໜ້ອຍໃນທຳມະຊາດ, ບໍ່ມີສວນປູກຍ້ອນຂາດພື້ນທີ່(ບ້ານຫ້ວຍມັນ)ສ່ວນ

  ບ້ານນ້ຳບໍ່ແມ່ນມີແຕ່ຢູ່ໄກການໄປການມາແມ່ນມີຄວາມຫຍຸ້ງຍາກ ບ້ານນ້ຳບໍ່ເປັນ ບ້ານທີ່ຍົກຍ້າຍມາຢູ່ໃໝ່ຈຶ່ງບໍ່ມີພື້ນທີ່ທຳການຜະລິດ, ສ່ວນຫຼາຍແມ່ນອາໄສທຳມະຊາດ, ຄົນເກັບຫຼາຍແລະ ໄລຍະຂອງການເກັບກູ້ແມ່ນສັ້ນມີພຽງແຕ່ 1-2 ເດືອນ ເທົ່ານັ້ນຄື: ເດືອນ 2-4 ຖ້າເກັບບໍ່ ທັນໃນຊ່ວງ 2 ເດືອນນີ້ກໍ່ແກ່ ແລະ ຕາຍໄປເອງ. ດັ່ງນັ້ນ, ຈຶ່ງບໍ່ສາມາດຕອບ ສະໜອງ ໄດ້ຢ່າງ ພຽງພໍ ກັບຕາມຄວາມຕ້ອງການຂອງຕະຫຼາດ .

**ປໍສາ** (*Broussonetia papyrifera* (L.) Vent.):

- ປໍສາເປັນພືດທີ່ມີການເຕີບໂຕໄວເຊິ່ງມັກເກີດຢູ່ຕາມແຄມຫ້ວຍ, ປ່າເລົ່າອ່ອນ ແລະ ຮ່ອມພູທີ່ມີຄວາມຊຸ່ມຊື່ນລະດັບຄວາມສູງຈາກໜ້ານ້ຳທະເລປະມານ 700-800 ແມັດ, ຮອບວຽນ ຂອງການເກັບກູ້ແມ່ນ 6 ເດືອນຂຶ້ນໄປ.
- ສະພາບພື້ນທີ່ການກະຈາຍຂອງປໍສາທັງ 4 ບ້ານ ເຫັນວ່າແຕ່ລະບ້ານ ປໍສາ ໃນທຳມະຊາດ

ແມ່ນຍັງເຫຼືອໜ້ອຍແຕ່ໃນສວນປູກຂອງບຸກຄົນແມ່ນເລີ່ມຂະຫຍາຍພື້ນທີ່ປູກຫຼາຍຂື້ນ ເພາະວ່າປໍສາສາມາດຂະຫຍາຍພັນໄດ້ງ່າຍສະດວກ ແລະ ໃຊ້ຕົ້ນທຶນຕ່ຳໃນການປູກ.

- ປໍສາເປັນພືດທີ່ໃຫຍ່ໄວສະເລ່ຍໃນປີໜຶ່ງລວງສູງປະມານ 1-3 ແມັດ, ໜ້າຕ້າງ 1-2 ຊັງຕີແມັດ/ປີ, ການເກັບກູ້ແມ່ນໃນຊ່ວງເດືອນ3-4 , ຂັ້ນຕອນໃນການເກັບກູ້ແມ່ນໃຊ້ພ້າຕັດລຳຕົ້ນ, ຫຼັງຈາກນັ້ນນຳມາລອກເອົາເປືອກອອກຈາກເນື້ອໄມ້,ເອົາເປືອກມາຂູດເປືອກນອກອອກແລ້ວຕາກແດດ 2-3 ມື້ຈຶ່ງຂາຍອອກ.

- ປໍສາເປັນໄມ້ຢືນຕົ້ນຂະໜາດນ້ອຍທີ່ມີການຈະເລີນເຕີບໂຕໄດ້ໄວເຊິ່ງມີລວງສູງປະມານ 5-10 ແມັດ ແລະ ໜ້າຕ້າງປະມານ 20-30 ຊັງຕີແມັດ, ເປັນລັກສະນະໄມ້ພຸ່ມແຕກກິ່ງກ້ານຫຼາຍ, ເກີດຕາມປ່າເຫຼົ່າອ່ອນ, ແຄມຫ້ວຍ ແລະ ບ່ອນທີ່ມີຄວາມຊຸ່ມຊື້ນ, ເຊິ່ງຫ່າງຈາກລະດັບໜ້ານ້ຳທະເລສູງປະມານ 700-800 ຊັງຕີແມັດ, ລົງມາ ໃນປະເທດລາວມີປໍສາ 2 ຊະນິດຄື:ໝາກມົນ ແລະ ໝາກຍາວ, ສາມາດຂະຫຍາຍພັນດ້ວຍເຫງົ້າ, ຮາກ, ແກ່ນ ແລະ ກິ່ງງ່າທີ່ປັກຊຳຈະແຕກແໜງໄດ້ດີສະດວກໃນການຂະຫຍາຍພັນແລະ ປູກເປັນພືດເສດຖະກິດ.
- ຊາວກະສິກອນເຮົາມັກນຳໃຊ້ພາກສ່ວນ ໃບເປັນອາຫານ ສັດ, ພາກສ່ວນຮາກ, ລຳປະສົມກັບພືດຊະນິດອື່ນເປັນຢາດີທ້ອງຂີ້ຮາກ ແລະ ນຳໃຊ້ເປືອກເຮັດເຊືອກ, ເຮັດເຈ້ຍສຳລັບບູຊາ (ຕາມຮີດຄອງປະເພນີ), ເຮັດໂຄມໄຟ, ປັ້ມຊຽນ ແລະ ອື່ນໆ, ລຳຕົ້ນໃຊ້ເປັນເຊື້ອເພີງ ປະຈຸບັນຊາວກະສິກອນສ່ວນໃຫຍ່ມັກລອກເອົາເປືອກແຫ້ງສົ່ງຂາຍເປັນສິນຄ້າໃນລາຄາ 3.000 -3.500 ກີບ/ກິໂລ.
- ບັນຫາຂອງປໍສາແມ່ນ: ລອກຍາກໃນຊ່ວງ ລະດູໜາວ ເດືອນ 11-1(ສາກົນ) ປະຊາຊົນບໍ່ນິຍົມເກັບໄລຍະນີ້ເນື່ອງຈາກວ່າປໍສາຕິດແກນ ແລະ ລາຄາຕົກຕ່ຳໃນຊ່ວງລະດູຝົນ 7-10 ຍ້ອນວ່າໄລຍະນີ້ພົບຄວາມຫຍຸ້ງຍາກໃນການຕາກເຮັດໃຫ້ປໍສາບໍ່ແຫ້ງ, ຕົກໂໝກ, ປໍສາແດງ ບໍ່ໄດ້ຄຸນນະພາບຈຶ່ງເຮັດໃຫ້ລາຄາ ຕົກຕ່ຳ.

○ ຕາຕະລາງ 1: ການເກັບກູ້ ເຄື່ອງປ່າຂອງດົງ ຂອງເມືອງໂພນໄຊ ແຂວງຫຼວງພະບາງ ປີ 2006

| ຜະລິດຕະພັນ | ຈຳນວນ(ໂຕນ) | ລາຄາກີບ/ກິໂລ | ໝາຍເຫດ |
|---|---|---|---|
| ປໍສາ | 667.56 | 3.000 | ຕົວເລກທົ່ວເມືອງ |
| ແຂມ | 16.5 | 3.000 | |
| ເປືອກເມືອກ | 115.21 | 4.500 | |
| ດູກເດືອ | 74 ກິໂລ | 3.500 | |
| ໝາກຕາວ | 4.64 | 3.000 | |
| ເອື້ອງ | 31.6 | 1.000 | |
| ດ້ວງແມ້ | 3 | 25.000 | |
| ຂີງປ່າ | ? | 23.000 | |
| ເຄືອສາມທາງ | 4.85 | 1.000 | |

II. ການຕະຫຼາດ

- ໃນປະຈຸບັນ ຕະຫຼາດແມ່ນ ມີຄວາມຕ້ອງການຜະລິດຕະພັນປໍສາ ແລະ ແຂມສູງ, ແຕ່ຜົນຜະລິດຍັງບໍ່ສາມາດຕອບສະໜອງໄດ້ຢ່າງພຽງພໍ, ໃນປີຜ່ານມາສາມາດເກັບກູ້ແຂມສົ່ງອອກ ຂາຍໄປສູ່ຕະຫຼາດເມືອງຫຼວງພະບາງໄດ້ ຈຳນວນ 9.65 ໂຕນ/ປີ ແລະ ປໍສາ ຈຳນວນ 22.5 ໂຕນ/ປີ ໃນຈຳນວນ 4 ບ້ານ (ນ້ຳບໍ່, ຫ້ວຍມັນ, ທ່າໂພ ແລະ ຫ້ວຍໂນະ) ຂໍ້ມູນປີ 2006.
  ທ່າອ່ຽງຂອງຜະລິດຕະພັນໃນປີຕໍ່ໄປ ຜົນຜະລິດແຂມ ແລະ ປໍສາ ຈະເພີ້ມຂື້ນເລັກນ້ອຍ ເພາະປະຊາຊົນສ່ວນຫຼາຍແມ່ນເລີ່ມຂະຫຍາຍມາປູກໃສ່ເຂດດິນທີ່ຜະລິດກະສິກຳເນື່ອງຈາກວ່າພໍ່ຄ້າທີ່ເກັບຊື້ປໍສາສ່ວນຫຼາຍແມ່ນຕ້ອງການປໍສາທີ່ປູກເອງຫຼາຍກ່ວາປໍສາທີ່ເກີດຂຶ້ນຕາມທຳມະຊາດຍ້ອນປໍສາທີ່ປູກເອງຈະຖືກຍົກເວັ້ນການເສຍພາສີຊັບພະຍາກອນ, ສ່ວນປໍສາທີ່ເກີດ ຂື້ ຕາມ ທຳ ມະ ຊາດແມ່ນຈະໄດ້ເສຍພາສີ ຊັບພະຍາກອນ 2 % ຂອງມູນຄ່າສິນຄ້າ (ອີງຕາມການສຳພາດ ບໍລິສັດ ແລະ ປະຊາຊົນ).

- ລາຄາ ແຂມ ໃນທ້ອງຖິ່ນ ແມ່ນ ໄດ້ແບ່ງອອກເປັນ 2 ລາຄາ (ຫົວປີ , ທ້າຍປີ ) ລາຄາຂອງແຂມ ໃນຊ່ວງຫົວປີ ແມ່ນ 3.000 ກີບ/ກິໂລ, ເພາະຊ່ວງນີ້ ແຂມແມ່ນມີຈຳນວນຫຼາຍ ແລະ ມີຫຼາຍ , ລາຄາແຂມທ້າຍປີ 3.500 ກີບ / ກິໂລ, ຍ້ອນແຂມເລີ່ມໝົດ ແລະ ຫາຍາກໃນເຂດ ຫ່າງໄກ ຈຶ່ງເຮັດໃຫ້ລາຄາສູງຂື້ນ.ຄຸນນະພາບຂອງແຂມກ່ອນການສົ່ງອອກແມ່ນ ຂ້ອນຂ້າງດີ (ຄວາມແຫ້ງ) ແຕ່ກໍ່ມີບາງຄັ້ງແມ່ນ ພໍ່ຄ້າໄດ້ນຳໄປແກ້ໄຂເພີ້ມຕື່ມ ເຊັ່ນ: < ລື້ນຂອງກ້ານດອກບໍ່ສະໝ່ຳສະເໝີ ແລະ ການລິກີ້ງງ່າບໍ່ລະອຽດດີ ປານໃດ (ແຕ່ຖ້າຫາກ ມີການເອົາໄຟລົນໃຫ້ແຂມແຫ້ງໄວທາງພໍ່ຄ້າຈະຫຼຸດລາຄາລົງ ຫຼື ບໍ່ເກັບຊື້ເລີຍ)> ,ສຳລັບລາຄາຂອງປໍສາແມ່ນ 3000-3500 ກີບ/ກິໂລ, ແຕ່ປໍສາຕ້ອງໄດ້ຄຸນນະພາບ (ຕາກ ແຫ້ງດີ, ລອກເປືອກນອກອອກໃຫ້ລ້ອນ), ແຕ່ຖ້າຫາກປໍສາ (ຕົກໂໝກ, ດຳ, ແດງລາຄາຈະລຸດ 2500 ກີບ/ກິໂລ)

- ການເກັບຊື້ຜະລິດຕະພັນ ແຂມ ແລະ ປໍສາ ສ່ວນຫຼາຍມີພໍ່ຄ້າມີກາງເປັນຜູ້ລົງມາເກັບ ຊື້ໃນບ້ານແລ້ວ ສົ່ງຂາຍໃຫ້ທາງບໍລິສັດໃຫ່ຍ ທີ່ຢູ່ແຂວງຫຼວງພະບາງ, ເຊີ່ງ ມີຈຳນວນ 3 ບໍລິສັດ (ເພັດລາມາ, ແສງຈັນ, ບຸນເພັງ )

- ຮູບແບບການນຳໃຊ້ທີ່ພົບເຫັນປຸງແຕ່ງສຳເລັດຮູບ ແຂມ ແມ່ນ : ໃຊ້ເຮັດຟອຍກວດ, ຕັ່ງນັ່ງໃນເຮືອນ , ປໍສາແມ່ນໃຊ້ເຮັດເຈັ້ຍ, ແຕ່ສ່ວນໃຫ່ຍແມ່ນຂາຍເປັນວັດຖຸດິບສົ່ງອອກ ຂາຍຕ່າງປະເທດໄທ




- ການກະຈາຍຂໍ້ມູນຂ່າວສານ ດ້ານການຕະຫຼາດ ແລະ ລາຄາຂອງ ຜະລິດຕະພັນ ແມ່ນຍັງບໍ່ທັນຮັບຮູ້ ໄດ້ຢ່າງທົ່ວເຖິງ, ສ່ວນຫຼາຍຈະຮູ້ພຽງເລັກນ້ອຍນໍາແຕ່ພໍ່ຄ້າທີ່ມາເກັບ ຊື້ເທົ່ານັ້ນ ເຊັ່ນ: ລາຄາ, ຕະຫຼາດທີ່ສົ່ງອອກ ພາຍໃນແຂວງ.
- ບັນຫາຕ່າງໆຂອງຜະລິດຕະພັນແມ່ນພໍ່ຄ້າຄົນກາງມາຍາດແຍ່ງກັນຊື້ເຮັດໃຫ້ສິນຄ້າບໍ່ມີ ຄຸນນະພາບ(ຕາກບໍ່ແຫ້ງ) ສຸດທ້າຍ ພໍ່ຄ້າກໍ່ມາກົດໜ່ວງລາຄາສິນຄ້າລົງໃນໄລຍະຜ່ານມາ.

III. ນະໂຍບາຍ - ຮີດຄອງປະເພນີ ແລະ ເສດຖະກິດ ສັງຄົມ

- ລະບຽບຫຼັກການຕ່າງໆຂອງເມືອງທີ່ມີຕໍ່ຜະລິດຕະພັນສະເພາະແຂມ ແລະ ບໍສາພັກ-ລັດບໍ່ມີການຫວງຫ້າມສໍາລັບການຂຸດຄົ້ນແຕ່ມີລະບຽບການສໍາລັບຜູ້ເກັບຊື້ເຊັ່ນ: ພໍ່ຄ້າມີກາງ ຫຼື ບໍລິສັດຜູ້ມາເກັບຊື້ ຕ້ອງໄດ້ເສຍຄ່າພາສີໃຫ້ກັບພາກສ່ວນທີ່ກ່ຽວຂ້ອງເຊັ່ນ : ຫ້ອງການ ກະສິກໍາ ແລະ ປ່າໄມ້ເມືອງ, ຫ້ອງການການຄ້າ-ການເງິນເມືອງ ແລະ ຫ້ອງການຄົມ ມະນາຄົມ.
- ການເສຍພາສີ ແມ່ນ ມີ 2 ລະບົບ ຄື: ແບບມອບເໝົາ ແລະແບບເສຍເປັນຖົງວ.
- ແບບມອບເໝົາ ຄື : ຜູ້ປະກອບການຈະເສຍພາສີໃຫ້ ເມືອງ 3.000.000ກີບ/ປີ , ເສຍຄ່າຈໍານວນຖົງວ 10.000 ກີບ/1ຖົງວ ໃຫ້ ການຄ້າເມືອງ ແລະ ຄົມະນາຄົມ 5.000 ກີບ/ຖົງວ

- ແບບເປັນຖົງວຄື: ຜູ້ປະກອບການຕ້ອງປະຕິບັດເຊັ່ນ:

* ເສຍໃຫ້ດ່ານ 100.000 ກີບ/1ໂຕ່ນ

* ເສຍໃຫ້ການເງິນ 5%/ຖົງວ

* ເສຍໃຫ້ກະສິກໍາ 3%/ຖົງວ

* ເສຍໃຫ້ການຄ້າ 10.000 ກີບ/ຖົງວ

* ຄົມມະນາຄົມ 5.000ກີບ/ຖົງວ

- ການປະຕິບັດການຍຶດຖືຮີດຄອງປະເພນີ ແລະ ຊີວິດການເປັນຢູ່ ຂອງປະຊາຊົນສໍາລັບ ຜະລິດຕະພັນ ແມ່ນ ສາມາດເກັບກູ້ ໄດ້ທຸກເພດໄວ(ຍິງ, ຊາຍ, ເດັກນ້ອຍ).
- ການໄປເກັບກູ້ ຜະລິດຕະພັນສ່ວນຫຼາຍພາຍໃນບ້ານແມ່ນຜູ້ຍິງເປັນຜູ້ໄປ ເກັບກູ້ຫຼາຍກ່ວາ ໝູ່ເຊິ່ງກວມອັດຕາສ່ວນ 70% ຂອງຈໍານວນພົນໃນບ້ານ (ອີງຕາມການສໍາພາດຕົວຈິງຂອງ ຊາວກະສິກອນ).

- ປຽບທຽບລາຍຮັບຂອງ 3 ລະດັບຄອບຄົວ 4 ບ້ານ ທີ່ໄດ້ຮັບຈາກແຂມ ແມ່ນບໍ່ມີຄວາມແຕກຕ່າງກັນຫຼາຍເຊັ່ນ :

ແຂມ:

| ຊື່ບ້ານ | ຮັ່ງມີ(%) | ປານກາງ(%) | ຂາດກີນ(%) | ໝາຍເຫດ |
|---|---|---|---|---|
| ຫ້ວຍມັນ | 39 | 5.9 | 0 | |
| ນ້ຳບໍ່ | 0 | 44.5 | 8 | |
| ທ່າໂພ | 45 | 44.6 | 83 | |
| ຫ້ວຍໂນະ | 55 | 44.5 | 28 | |
| ສະເລ່ຍ | 35 | 35 | 30 | |

ປໍສາ:

| ຊື່ບ້ານ | ຮັ່ງມີ(%) | ປານກາງ(%) | ຂາດກີນ(%) | ໝາຍເຫດ |
|---|---|---|---|---|
| ຫ້ວຍມັນ | 66 | 84.5 | 88 | |
| ນ້ຳບໍ່ | 55 | 35.5 | 17.75 | |
| ທ່າໂພ | 75.5 | 41.5 | 17.12 | |
| ຫ້ວຍໂນະ | 40 | 51.5 | 34 | |
| ສະເລ່ຍ | 58.76 | 53 | 39.26 | |

- ຄອບຄົວຮັ່ງມີສ່ວນໃຫຍ່ຈະບໍ່ໄດ້ຈາກການຂາຍເຄື່ອງປ່າຂອງດົງເພາະຈະເຮັດກິດຈະກຳຄ້າຂາຍຫຼາຍກ່ວາຈຶ່ງບໍ່ມີເວລາຫວ້າງໄປເກັບເຄື່ອງປ່າຂອງດົງມາຂາຍ, ສ່ວນຄອບຄົວປານກາງ ແລະ ຂາດກີນການເກັບເຄື່ອງປ່າ ຂອງດົງ ມາຂາຍເຫັນວ່າມີຄວາມ ສຳຄັນ ຫຼາຍສຳລັບ ຊີວິດການ ເປັນຢູ່ເພາະລາຍຮັບໃນປີໜຶ່ງສ່ວນໃຫຍ່ແມ່ນໄດ້ຈາກການຂາຍ ແຂມ ແລະ ປໍສາ

- ບັນຫາຕ່າງໆ ໃນການເກັບກູ້ຜະລິດຕະພັນແຂມ:

  ບັນຫາໃນການເກັບກູ້ແຂມແມ່ນມີຄວາມລຳບາກຍ້ອນພື້ນທີ່ຫ່າງໄກບໍ່ມີເສັ້ນທາງຄົມມະນາຄົມ ແລະ ໃນເວລາເກັບກູ້ເກີດອາການຄັນຄາຍຕາມຕົນໂຕ ແລະ ໃບຂອງແຂມຄົມຄ້າຍຄືມີດ ສາມາດເປັນອັນຕະລາຍຕໍ່ຮ່າງກາຍໄດ້.

- ບັນຫາໃນການເກັບກູ້ປໍສາ:

  ສ່ວນໃຫຍ່ແມ່ນຈະລອກຍາກເພາະເປືອກຈະຕິດແກນເນື່ອງຈາກວ່າເກັບກູ້ບໍ່ຖືກລະດູການ (ລະດູໜາວ ) ສາເຫດທີ່ປະຊາຊົນເກັບເວລານີ້ ເພາະປໍສາມີລາຄາສູງ) , ມີພ້ອຍແມ່ຄ້າມີການຍາດແຍ່ງກັນເກັບຊື້, ອີກບັນຫາໜຶ່ງ ຜະລິດຕະພັນປໍສາຄຸນນະພາບຕ່ຳ (ດຳ, ແດງ, ຕິກໂໝກ) ສາເຫດຍ້ອນຊ່ວງການເກັບກູ້ຖືກລະດູຝົນ, ບໍ່ມີແດດຕາກ, ເຮັດໃຫ້ປໍສາບໍ່ໄດ້ຄຸນນະພາບ ເຮັດໃຫ້ລາຄາຕ່ຳເພາະຊ່ວງນີ້ສິນຄ້າມີຫຼາຍ ປະຊາຊົນເລີຍບໍ່ນິຍົມລອກ ເພາະ ບໍ່ກຸ້ມຄ່າກັບຄ່າແຮງງານ

IV. ເຕັກນິກ ແລະ ການປຸງແຕ່ງ ຜະລິດຕະພັນແຂມ ແລະ ປໍສາ

**ແຂມ:**

- ການປູກ ແລະ ການຂະຫຍາຍພັນ ສ່ວນຫຼາຍແມ່ນ ປູກດ້ວຍເຫງົ້າ ໂດຍຂຸດເປັນຂູມ , 1 ຂູມ ແມ່ນສາມາດປູກໄດ້ 3-4 ເຫງົ້າ .
- ການເກັບກູ້ ພາຍຫຼັງທີ່ປູກໄດ້ 1 ປີ ສາມາດເກັບກູ້ໄດ້ ໂດຍ ໃຊ້ພ້າ,ມີດ, ກ່ຽວ ຕັດເອົາກ້ານຂອງດອກ ຍາວປະມານ 1 ແມັດ ,ຈາກນັ້ນນຳມາມັດ ແລະ ແບກກັບບ້ານ.
- ການປຸງແຕ່ງພາຍຫຼັງທີ່ຕາກແດດ 1-2ມື້ ແລະ ທູບ ຫຼື ຟາດ ສຳເລັດແລ້ວ, ການປຸງແຕ່ງໃຊ້ພາຍໃນບ້ານ ມີແຕ່ໃຊ້ເຮັດ ຟອຍກວດ ຫຼື ຕັ່ງນັ່ງດັ່ງທີ່ໄດ້ກ່າວມາຂ້າງເທິງນັ້ນ ສຳລັບເຮັດເປັນຜະລິດຕະພັນຢ່າງອື່ນ ແມ່ນຍັງບໍ່ທັນມີເຕັກນິກ ແລະ ຄວາມສາມາດ ເທື່ອ.
- ການຈັດສັນຄຸ້ມຄອງຜະລິດຕະພັນພາຍໃນບ້ານແມ່ນຍັງບໍ່ທັນມີແນວຄິດລິເລີ່ມໃນການຈັດຕັ້ງ ປະຕິບັດເທື່ອ, ປະຈຸບັນແມ່ນຍັງເກັບກູ້ ແລະ ອາໄສຕາມທຳມະຊາດເປັນຈຸດຫຼັກ.
- ບັນຫາກ່ຽວກັບ ການປຸງແຕ່ງ ຂອງຜະລິດຕະພັນ ແມ່ນຍັງຂາດເຕັກນິກທາງດ້ານວິຊາການສຳລັບການປຸງແຕ່ງຜະລິດຕະພັນ ໃຫ້ມີຄຸນນະພາບ .

**ປໍສາ:**

- ປໍສາເປັນພືດທີ່ສາມາດປູກໃນພື້ນທີ່ສວນຂອງຊາວກະສິ ກອນ, ເພາະສາມາດຂະຫຍາຍພັນດ້ວຍເຫງົ້າ ,ຮາກ ,ແກ່ນ ,ແລະ ກິ່ງງ່າທີ່ປັກຊຳ, ຮອບວຽນການເກັບກູ້ ແມ່ນໃຊ້ເວລາ 6-8 ເດືອນ ຈິ່ງສາມາດເກັບກູ້ໄດ້

- ຮູບແບບການເກັບກູ້ແມ່ນພາກສວນເປືອກຂອງລຳຕົ້ນໂດຍໃຊ້ຂັ້ນຕອນໃນການເກັບກູ້ຄື: ໃຊ້ພ້າຕັດເປັນທອນ , ລອກເປືອກອອກ, ແລ້ວຂູດເປືອກນອກອອກ, ນຳໄປຕາກແດດ ໃຊ້ເວລາປະມານ 1-2 ມື້ ,ເຮັດເປັນມັດ ຂາຍເປັນກິໂລ, ໃນປີໜຶ່ງສາມາດເກັບກູ້ໄດ້ຄັ້ງດຽວ ຊ່ວງເດືອນ 2-5 ພາຍໃນບ້ານ ແມ່ນໄດ້ມີການຈັດ ສັນຄຸ້ມ ຄອງເຄື່ອງປ່າຂອງດົງຊະນິດນີ້ວິຊາການໄດ້ລົງແນະນຳປູກເປັນສວນ.

- ບັນຫາປະຊາຊົນແມ່ນຍັງຂາດດ້ານເຕັກໂນໂລຢີການປຸງແຕ່ງເພາະວ່າຜະລິດຕະພັນປໍສາສວນຫຼາຍແມ່ນຂາຍເປັນວັດຖຸດິບ

V. ບັນດາຜູ້ປະກອບການ

- ຜູ້ປະກອບການເກັບຊື້ ແລະ ຄ້າຂາຍຜະລິດຕະພັນ ແຂມ




| ຜູ້ປະກອບການ | ລາຄາຂາຍ | ຜົນກຳໄລ | ລາຍຮັບ(%) | ຈຳນວນຄຄ/ຄົນ | ໝາຍເຫດ |
|---|---|---|---|---|---|
| ຊາວກະສິກອນ | 3.000 | 3.000 | 12 | 160/ 480 | Example: 1Kg/1t |
| ພໍ່ຄ້າລະດັບບ້ານ | 3.200 | 200 | 0.8 | 12/36 | |
| ພໍ່ຄ້າຄົນກາງ | 3.500 | 100 | 0.4 | 4/8 | |
| ບໍລິສັດ ເກັບຊື້ຍ່ອຍ | 4.000 | 325 | 1.3 | 5/25 | |
| ບໍລິສັດເພັດລາມາ | 25.000 | 17.000 | 68 | 1/30 | |
| ລັດ-ເກັບພາສີ | | | 17.5 | | |

- ບົດບາດແລະ ໜ້າທີ່ ຂອງຜູ້ປະກອບການ ຜະລິດ ແລະ ເກັບຊື້ (ແຂມ) ແລະ (ປໍສາ)

ແຂມ:




ໜ້າທີ່:
- ເກັບກູ້ຈາກປ່າ
- ຕາກແດດ
- ຕັດແຕ່ງກິ່ງກ້ານ

- ຮັບໂຮມສິນຄ້າ
- ຄັດເລືອກ
- ຂາຍອອກໃຫ້ພໍ່ຄ້າກາງ

- ເກັບຊື້ແລະຂາຍຕໍ່ເອົາກຳໄລ

- ຂາຍສົ່ງໃຫ້ບໍລິສັດພາຍໃນ ແລະ ຕ່າງປະເທດ

- ປຸງແຕ່ງຂາຍເປັນຜ/ລຕະພັນ(ເຈ້ຍ)

ປໍສາ:

| | | | | |
|---|---|---|---|---|
| ຜົນພະລິດ → | ເກັບຮັກສາ → | ພໍ່ຄ້າມີກາງຂະໜາດໃຫຍ່ → | ການປຸງແຕ່ງ → | ການສົ່ງອອກ |
| ຊາວບ້ານ → | ພໍ່ຄ້າໃນບ້ານ → | ພໍ່ຄ້າລາຍໃຫຍ່ → | ບໍລິສັດປຸງແຕ່ງ → | ການສົ່ງອອກ |
| ໜ້າທີ່: - ເກັບກູ້ຈາກປ່າ<br>- ຕາກແດດ<br>- ຕັດແຕ່ງກິ່ງກ້ານ | - ຮັບໂຮມສິນຄ້າ<br>- ຂັດເລືອກເກດ<br>- ຂາຍອອກໃຫ້ພໍ່ຄ້າກາງ | - ເກັບຊື້ແລະຂາຍຕໍ່ເອົາກຳໄລ | - ຂາຍສິ່ງໃຫ້ບໍລິສັດພາຍໃນ ແລະ ຕ່າງປະເທດ | - ປຸງແຕ່ງຂາຍເປັນຜ/ພສຳເລັດຮູບ(ເຈັ້ຍ) |

- *SWOT*

| ບັນຫາ | ໂອກາດ | ຂໍ້ສະເໜີ |
|---|---|---|
| ອຳນາດຂອງຕະຫຼາດແມ່ນຍັງ ຂຶ້ນຢູ່ກັບໄທ | • ສາມາດຂະຫຍາຍຊັບພະຍາກອນທຳມະຊາດ ໄດ້ໂດຍການປູກເສີມ | • ຈັດໃຫ້ມີກອງປະຊຸມລະຫວ່າງ ກຸ່ມພໍ່ຄ້າ ແລະ ບໍລິສັດເພື່ອແກ້ ໄຂອຳນາດການຕະຫຼາດຂອງໄທ |
| • ຂາດການສ້າງຕັ້ງກຸ່ມເກັບຊື້ພາຍໃນບ້ານ | • ສາມາດປຸງແຕ່ງຜະລິດຕະພັນສຳເລັດຮູບຂາຍ ຢູ່ ພາຍໃນປະເທດ | • ລັດຖະບານລາວຕ້ອງໃຫ້ການ ຊ່ວຍເຫຼືອໃນການຊອກຕະຫຼາດ ແລະການໂຄສະນາຂາຍສິນຄ້າ ໃຫ້ |
| • ຜູ້ຜະລິດຍັງຜະລິດບໍ່ເປັນຂະບວນການ | • ປະເທດໄທໄດ້ເກັບຊື້ຜະລິດຕະພັນຈາກລາວ, ຍ້ອນຄ່າຄອງຊີບຂອງໄທສູງຈຶ່ງບໍ່ຊື້ຜະລິດຕະ ພັນຈາກປະເທດຕົນເອງ | • ສ້າງຕັ້ງກຸ່ມໃນການເກັບຊື້ຢູ່ພາຍໃນບ້ານ(ພໍ່ຄ້າຕ້ອງປັບປຸງຄືນ ທາງດ້ານລາ ຄາ, ຄຸນນະພາບ ແລະ ປະລິມານ) |
| • ຂາດຄວາມເຊື່ອໝັ້ນເຊິ່ງກັນ ແລະ ກັນລະຫວ່າງຜູ້ຜະລິດ ແລະ ຜູ້ເກັບຊື້ | • ປະເທດຈີນໄດ້ນຳໃຊ້ຜະລິດຕະພັນສຳ ເລັດຮູບ ຂອງລາວເຊັ່ນ:ຝາອັດເພດານ, ເຈ້ຍ ແລະ ອື່ນໆ (ຍັງຕ້ອງການຂໍ້ມູນ ໃນການຜະລິດຈາກລາວ ອີກ) | • ສົ່ງເສີມປະຊາຊົນໃຫ້ປູກປໍສາ ແຄມນ້ຳເພື່ອປະຢັດແຮງງານ ແລະ ສະດວກໃນ ການຕົ້ມຂາຍໃຫ້ບໍລິສັດ |
| • ລະບຽບໃນການຄຸ້ມຄອງໃນການ ແບ່ງເຂດການນຳໃຊ້ທີ່ດິນຍັງປະ ຕິບັດບໍ່ທັນໄດ້ດີ | • ໃນປີ 2010 ຈະເປີດການຄ້າເສລີຢູ່ປະ ເທດລາວໂດຍ ບໍ່ມີການເສຍພາສີ | • ສ້າງໃຫ້ປະຊາຊົນມີວຽກເຮັດງານ ທຳໂດຍຮັບຈ້າງແຮງງານ |
| • ພໍ່ຄ້າຍັງບໍ່ທັນປະຕິບັດກົດລະບຽບ ໃນການເສຍພາສີຂອງພັກ-ລັດ, ປະຈຸບັນຍັງມີບາງພາກສ່ວນທີ່ລັກ ລອບ ຊື້ຂາຍໂດຍບໍ່ເສຍພາສີ | | • ພັດທະນາໝູ່ບ້ານໂດຍມີບ່ອນຕົ້ມປໍ ສາຢູ່ກັບບ້ານເພື່ອໃຫ້ໄດ້ ລາຄາດີ |
| • ຂາດຂໍ້ມູນຂ່າວສານທາງດ້ານລາ ຄາການຕະ ຫຼາດ | | • ໃຫ້ລັດຖະບານລາວຊອກ ຫາທຶນ ຕ່າງປະເທດມາຊ່ວຍ |
| • ບໍລິສັດຂາດທຶນໃນການຂະຫຍາຍກິດຈະ ການ | | • ສ້າງຕັ້ງກອງທຶນໝູນວຽນຢູ່ພາຍ ໃນບ້ານ |
| | | • ທະນາຄານລາວໃຫ້ຊ່ວຍອຳ ນວຍ ຄວາມສະດວກໃນການໃຫ້ທຶນກູ້ຢືມ |

# ຂໍ້ສະເໜີ ແລະ ບົດສະເໜີການຄົ້ນຄ້ວາຂອງທີມງານ

| ຂໍ້ສະເໜີ | ລາຍຊື່ຜູ້ຈະຂຽນບົດສະເໜີການຄົ້ນຄ້ວາ |
|---|---|
| • ຈັດໃຫ້ມີກອງປະຊຸມລະຫວ່າງ ກຸ່ມພໍ່ຄ້າ ແລະ ບໍລິສັດເພື່ອແກ້ໄຂອຳນາດການຕະຫຼາດຂອງໄທ | |
| • ລັດຖະບານລາວຕ້ອງໃຫ້ການຊ່ວຍເຫຼືອໃນການຊອກຕະຫຼາດ ແລະການໂຄສະນາຂາຍສິນຄ້າ ໃຫ້ | |
| • ສ້າງຕັ້ງກຸ່ມໃນການເກັບຊື້ຢູ່ພາຍໃນບ້ານ(ພໍ່ຄ້າຕ້ອງປັບປຸງຄືນທາງດ້ານລາ ຄາ, ຄຸນນະພາບ ແລະ ປະລິມານ) | • ນ ພອນທິບ+ພອນສະນິດ+ທ ສິມພັນ+ໄຊຍະສິດ |
| • ສົ່ງເສີມປະຊາຊົນໃຫ້ປູກປໍສາ ແຄມນ້ຳເພື່ອປະຢັດແຮງງານ ແລະ ສະດວກໃນ ການຕົ້ມຂາຍໃຫ້ບໍລິສັດ | • ທໄຊຍະສິດ+ສີຈັນ+ນິດພະກອນ+ໄຊປັນຍາ+ນ ມະນີຈັນ |
| • ສ້າງໃຫ້ປະຊາຊົນມີວຽກເຮັດງານທຳໂດຍຮັບຈ້າງແຮງງານ | • ທ ສີທົນ+ ກິແກ້ວ |
| • ພັດທະນາໝູ່ບ້ານໂດຍໃຫ້ມີບ່ອນຕົ້ມປໍສາຢູ່ກັບບ້ານເພື່ອໃຫ້ປໍສາໄດ້ ລາຄາສູງ | • ນ ຈິດຕາວັນ+ມະນີຈັນ |
| • ໃຫ້ລັດຖະບານລາວຊອກ ຫາທຶນ ຕ່າງປະເທດມາຊ່ວຍ | |
| • ສ້າງຕັ້ງກອງທຶນໝູນວຽນຢູ່ພາຍ ໃນບ້ານ | • ນ ພອນສະນິດ + ທ ກິແກ້ວ+ ທ ອານຸສອນ |
| • ທະນາຄານລາວໃຫ້ຊ່ວຍອຳ ນວຍ ຄວາມສະດວກໃນການໃຫ້ທຶນກູ້ຢືມ | |

## *VI. ຈຳນວນພົນ ໃນທີມງານ : ທີ່ປະກອບສ່ວນເຂົ້າໃນການຂຽນບົດລາຍງານໃນຄັ້ງນີ້ມີລາຍຊື່ດັ່ງລຸ່ມນີ້:*

| ລ/ດ | ຊື່ ແລະ ນາມສະກຸນ | ຕຳແໜ່ງ ແລະ ທີ່ຢູ່ |
|---|---|---|
| 1 | ທ່ານ ໄຊຊະນະອິນທະວົງ | ຮອງຫົວໜ້າສູນຄົ້ນຄວ້າກະສິກຳແລະປ່າໄມ້ພາກເໜືອ |
| 2 | ທ່ານ ສົມພັນ ສະກັນເພັດ | ຫົວໜ້າສະຖານີຄົ້ນຄ້ວາກະສິກຳ-ປ່າໄມ້ (ທົ່ງຄັງ) |
| 3 | ທ່ານ ສົມບູນ ໂຄດໄຊ | ຫົວໜ້າສະຖານີຄົ້ນຄ້ວາປ່າໄມ້ (ແກ້ງເບັນ) |
| 4 | ທ່ານ ສີຈັນ ຈັນດີພົດ | ວິຊາການ ປ່າໄມ້ (ສະຖານີຄົ້ນຄ້ວາປ່າໄມ້) |
| 5 | ທ່ານ ກິແກ້ວ ສິງຫາລາດ | ວິຊາການ ປ່າໄມ້ (ສະຖານີຄົ້ນຄ້ວາປ່າໄມ້) |
| 6 | ທ່ານ ສີທົນ ໂສມມະລັດ | ວິຊາການ ປ່າໄມ້ (ສະຖານີຄົ້ນຄ້ວາປ່າໄມ້) |
| 7 | ທ່ານ ນິດພະກອນ ຄຳພາສິດ | ວິຊາການ ປ່າໄມ້ (ສະຖານີຄົ້ນຄ້ວາ ກະສິກຳ - ປ່າໄມ້) |
| 8 | ທ່ານ ໄຊຍະສິດ ພົນພັກດີ | ວິຊາການ ປ່າໄມ້ (ສະຖານີຄົ້ນຄ້ວາປ່າໄມ້) |
| 9 | ທ່ານ ໄຊປັນຍາ ມະຫາທິລາດ | ວິຊາການປ່າໄມ້(ສູນຄົ້ນຄ້ວາກະສິກຳແລະປ່າໄມ້ ພາກເໜືອ) |
| 10 | ທ່ານ ນ ພອນທິບ ທອງດາ | ວິຊາການ ປ່າໄມ້ (ສະຖານີຄົ້ນຄ້ວາປ່າໄມ້) |
| 11 | ທ່ານ ນ. ມະນີຈັນ ວໍລະບຸດ | ວິຊາການ ປ່າໄມ້ (ສະຖານີຄົ້ນຄ້ວາປ່າໄມ້) |
| 12 | ທ່ານ ນ ພອນສະນິດ ຜົນນະຈິດ | ວິຊາການເສດຖະກິດສັງ-ຄົມ (ສູນຄົ້ນຄ້ວາກະສິກຳ ແລະ ປ່າໄມ້ ພາກເໜືອ) |
| 13 | ທ່ານ ນ ຈິດຕາວັນ ແກ້ວລາສີ | ວິຊາການ ປ່າໄມ້ ຫ້ອງການປະສານງານເມືອງໂພນໄຊ |
| 14 | ທ່ານ ອານຸສອນ | ວິຊາການ ປ່າໄມ້ ຫ້ອງການປະສານງານເມືອງໂພນໄຊ |
| 15 | ທ່ານ ຈັນໄຕ | ວິຊາການ ປ່າໄມ້ ຫ້ອງການປະສານງານເມືອງໂພນໄຊ |
| 16 | ທ່ານ ມາຕິນ ໄກຣມານສ໌ | ທີ່ປຶກສາດ້ານເຄື່ອງປ່າຂອງດົງຂອງໂຄງການ SNV |

ຂໍ້ມູນສຳພາດພໍ່ຄ້າ (ທ ນຶກ)

1 ຊື່ ທ ນຶກ ບ້ານກອກຫວານ ເບີໂທ 5170237

2 ຂັ້ນຕອນດຳເນີນທຸລະກິດ,

ເມື່ອເຖິງລະດູການເກັບກູ້ຜົນຜະລິດເຂົ້າເຈົ້າຈະເຂົ້າໄປວາງເງິນໃຫ້ແມ່ນຄ້າຢູ່ບ້ານເກັບຊື່ໃຫ້ເພື່ອຄວາມສະດວກໃນການເກັບເອົາສິ້ນຄ້າໃນແຕ່ລະຖ້ຽວເພື່ອບໍ່ໃຫ້ເສຍເວລາ.ການດຳເນີນທຸລະກິດແມ່ນແມ່ນປະຕິບັດໄດ້ 3 ປີແລ້ວໂດຍມີການເສຍຄ່າຕ່າງໆຢູ່ດ້ານຫ້ວຍມັນ.

3 ເຄື່ອງປ່າຂອງດົງທີ່ເກັບຊື່ໃນເຂດເມືອງໂພນໄຊ

| ຜະລິດຕະພັນ | ຈຳນວນ | ລາຄາຊື້ | ລາຄາສົ່ງບໍລິລັດ |
|---|---|---|---|
| ແຂມ | 7ໂຕ່ນ | 3.000 ກີບ/Kg | 3.500ກີບ/Kg |
| ປໍສາ | 8ໂຕ່ນ | 3.000 ກີບ/Kg | 3.500 ກີບ/Kg |
| ຂີ້ຊີ | 2ໂຕ່ນ | 3.500 ກີບ/Kg | 3.700 ກີບ/Kg |
| ຫົວດຸກເດືອ | 2ໂຕ່ນ | 4.000 ກີບ/Kg | 4.500 ກີບ/Kg |
| ຈັນໄດ | 1ໂຕ່ນ | 5.000 ກີບ/Kg | 6.000 ກີບ/Kg |
| ເປືອກເມືອກ | 3ໂຕ່ນ | 4.000 ກີບ/Kg | 4.500 ກີບ/Kg |
| ສາມຫາງ | 5ໂຕ່ນ | 500 ກີບ/Kg | 1.000 ກີບ/Kg |

ການເກັບຊື້ຜະລິດຕະພັນແມ່ນເລີ່ມແຕ່ ບ້ານຫ້ວຍເລິກຈົນເຖິງ ບ້ານທ່າຂ້າມ

4 ການສົ່ງຂາຍສິນຄ້າແມ່ນສົ່ງໃຫ້ບໍລິສັດຄື:

- ນ . ວອນ
- ຊຽງຈັນເພັງ(ບ. ຄຶກວາ)
- ນ. ນ້ອຍ ແຄມຂອງ
- ນ. ແສງຈັນ (ບ. ດອນຈໍ)

ການຂາຍສິນຄ້າແມ່ນສົ່ງເປັນວັດຖຸດິບ, ສຳລັບແຂມແມ່ນຮູ້ວ່າເຂົາເຈົ້ານຳໄປເຮັດຢູກວດເຮືອນ ແລະຜ້າຮົມ, ສວ່ນປໍສາ ແມ່ນເອົາໄປເຮັດເຈຍສາ, ປຶ້ມ

5 ຄ່າໃຊ້ຈ່າຍ

- ໃສ່ນ້ຳມັນລົດ 100.000ກີບ/ ຖ້ຽວ
- ເສຍພາສີຢູ່ດ້ານຫ້ວຍມັນ ຈະໄລ່ເປັນນ້ຳໜັກ 1 ໂຕ່ນ/ 100.000ກີບ ແລະ ເສຍການເງິນ 5%, ກະສິກຳ 3%, ການຄ້າ 10.000ກີບ/ ຖ້ຽວ ແລະ ສິ້ນເບື້ອອື່ນໆ100.000ກີບ/ ຖ້ຽວ

6 ຜົນກຳໄລ່ທີ່ໄດ້ຈາກເກັບຊື້ ແຂມ ແລະ ປໍສາແມ່ນ 300ກີບ/ ກິໂລ

7 ຄຸນນະພາບຂອງຜະລິດຕະພັນທີ່ເກັບຊື້

- ປໍສາ ລອກເປືອກໃຫ້ລ້ອນ, ຕາກແດດໃຫ້ແຫ້ງເກບຊື້ລາຄາດຽວບໍ່ໄດ້ມີການວາງເກດຂອງສິນຄ້າ
- ແຂມ ຫັກກ້ານໃຫ້ສັ້ນ, ຟາດດອກໃຫ້ລ້ອນ, ຕາກໃຫ້ແຫ້ງ

8 ຂັ້ນຕອນການຜະລິດ ແລະ ຄວນປັບປຸງຄຸນະພາບຄື: ຕາກໃຫ້ແຫ້ງດີກວ່າເກົ່າ, ແຂມຫັກກ້ານໃຫ້ສັ້ນ

9 ການດຳເນີນທຸລະກິດແມ່ນບໍ່ມີບັນຫາຍັງ

- ຊັບພະຍາກອນແມ່ນພຽງບໍກັບຄວາມຕ້ອງການຂອງຕະຫຼາດ

10 ແຜນທີ່ຈະພັດທະນາທຸລະກິດແມ່ນຄິດວ່າໃນປີຕໍ່ໄປຈະຂະຫຍາຍອອກອີກຖ້າປະຊາຊົນມີ
ຜະລິດຕະພັນຫຼາຍ

11 ທ່າອ່ຽງຂອງທຸລະກິດແມ່ນດີຂື້ນເທື່ອລະກ້າວຖ້າທຽບໃສ່ໃນປີທີ່ຜ່ານມາ

12 ຂໍ້ສະເໜີ

- ດ້ານຜູ້ຜະລິດ

  ຢາກໃຫ້ປະຊາຊົນຂະຫຍາຍພື້ນທີ່ປູກໃຫ້ຫຼາຍກວ່າເກົ່າຍ້ອນວ່າທາງບໍລິສັດແມ່ນຕ້ອງການຕະຫຼອດປີຖ້າປະຊາຊົນຜະລິດໄດ້ແມ່ນຕະຫຼອດປີແມ່ນຈະເກັບຊື້ຕະຫຼອດ

- ດ້ານລັດຖະບານ

  ແມ່ນຢາກໃຫ້ຫຼຸດຜ່ອນຄ່າພາສີລົງອີກ ຍ້ອນວ່ານອກຈາກການເສຍຄ່າພາສີແລ້ວຍັງໄດ້ເສຍຄ່າສິນເບືອອື່ນໆອີກ.

ຂໍ້ມູນສຳພາດພໍ່ຄ້າ (ທ ພຸດ)

1 ຊື່ ທ ນຶກ ບ້ານກອກຫວານ ເບີໂທ: 6576751

2 ຂັ້ນຕອນດຳເນີນທຸລະກິດ,

ເມື່ອເຖິງລະດູການເກັບກູ້ຜົນຜະລິດເຂົ້າເຈົ້າຈະເຂົ້າໄປວາງເງິນໃຫ້ແມ່ນຄ້າຢູ່ບ້ານເກັບຊື່ໃຫ້ເພື່ອຄວາມສະດວກໃນການເກັບເອົາສິ້ນຄ້າໃນແຕ່ລະຖ້ຽວເພື່ອບໍ່ໃຫ້ເສຍເວລາ.ການດຳເນີນທຸລະກິດແມ່ນແມ່ນປະຕິບັດໄດ້ 3 ປີແລ້ວໂດຍມີການເສຍຄ່າຕ່າງໆຢູ່ດ້ານຫ້ວຍມັນ.

3 ເຄື່ອງປ່າຂອງດົງທີ່ເກັບຊື່ໃນເຂດເມືອງໂພນໄຊ

| ຜະລິດຕະພັນ | ຈຳນວນ | ລາຄາຊື້ | ລາຄາສົ່ງບໍລິລັດ |
|---|---|---|---|
| ແຂມ | 7ໂຕ່ນ | 3.000 ກີບ/Kg | 3.500 ກີບ/Kg |
| ປໍສາ | 8ໂຕ່ນ | 3.000 ກີບ/Kg | 3.500 ກີບ/Kg |
| ຂີ້ຊີ | 2ໂຕ່ນ | 3.500 ກີບ/Kg | 3.700 ກີບ/Kg |
| ຫົວດູກເດືອ | 2ໂຕ່ນ | 4.000 ກີບ/Kg | 4.500 ກີບ/Kg |
| ຈັນໄດ | 1ໂຕ່ນ | 5.000 ກີບ/Kg | 6.000 ກີບ/Kg |
| ເປືອກເມືອກ | 3ໂຕ່ນ | 4000 ກີບ/Kg | 4.500 ກີບ/Kg |
| ສາມຫາງ | 5ໂຕ່ນ | 500 ກີບ/Kg | 1.000 ກີບ/Kg |

ການເກັບຊື້ຜະລິດຕະພັນແມ່ນເລີ່ມແຕ່ ບ້ານຫ້ວຍເລິກຈົນເຖິງ ບ້ານທ່າຂ້າມ ແລະ ນອກຈາກເຄື່ອງປ່າ ຂອງດົງແລ້ວຍັງໄດ້ເກັບຊື້ພືດກະສິກຳນຳອີກ

4 ການສົ່ງຂາຍສິນຄ້າແມ່ນສົ່ງໃຫ້ບໍລິສັດຄື:

- ນ . ວອນ
- ຊຽງຈັນເພັງ(ບ. ຄົກວາ)
- ນ. ນ້ອຍ ແຄມຂອງ
- ນ. ແສງຈັນ (ບ. ດອນຈໍ)
- ທ. ເຂັ້ມຄຳ ຄົວລົດສາຍເໜືອ

ການຂາຍສິນຄ້າແມ່ນສົ່ງເປັນວັດຖຸດິບ, ສຳລັບແຂມແມ່ນຮູ້ວ່າເຂົາເຈົ້ານຳໄປເຮັດຢູກວດເຮືອນ ແລະຜ້າຮິມ, ສວ່ນປໍສາ ແມ່ນເອົາໄປເຮັດເຈຍສາ, ປື້ມ, ເຈຍຫໍ່ຂອງຂັວນ

5 ຄ່າໃຊ້ຈ່າຍ

- ໃສ່ນ້ຳມັນລົດ 100.000ກີບ/ ຖ້ຽວ
- ເສຍພາສີຢູ່ດ້ານຫ້ວຍມັນ ຈະໄລ່ເປັນນ້ຳໜັກ 1 ໂຕ່ນ/ 100.000ກີບ ແລະ ເສຍການເງິນ 5%, ກະສິກຳ 3%, ການຄ້າ 10.000ກີບ/ ຖ້ຽວ ແລະ ສິ້ນເບື້ອອື້ນໆ100.000ກີບ/ ຖ້ຽວ

6 ຜົນກຳໄລ່ທີ່ໄດ້ຈາກເກັບຊື້ ແຂມ ແລະ ປໍສາແມ່ນ 300ກີບ/ ກິໂລ

7 ຄຸນນະພາບຂອງຜະລິດຕະພັນທີ່ເກັບຊື້

- ປໍສາ ລອກເປືອກໃຫ້ລ້ອນ, ຕາກແດດໃຫ້ແຫ້ງເກບຊື້ລາຄາດຽວບໍ່ໄດ້ມີການວາງເກດຂອງສິນຄ້າ
- ແຂມ ຫັກກ້ານໃຫ້ສັ້ນ, ຟາດດອກໃຫ້ລ້ອນ, ຕາກໃຫ້ແຫ້ງ

8 ຂັ້ນຕອນການຜະລິດ ແລະ ຄວນປັບປຸງຄຸນະພາບຄື: ຕາກໃຫ້ແຫ້ງດີກວ່າເກົ່າ, ແຂມຫັກກ້ານໃຫ້ສັ້ນ

9 ການດຳເນີນທຸລະກິດແມ່ນບໍ່ມີບັນຫາຍັງ

- ຊັບພະຍາກອນແມ່ນພຽງບໍກັບຄວາມຕ້ອງການຂອງຕະຫຼາດ

10 ແຜນທີ່ຈະພັດທະນາທຸລະກິດແມ່ນຄິດວ່າໃນປີຕໍ່ໄປຈະຂະຫຍາຍອອກອີກຖ້າປະຊາຊົນມີຜະລິດຕະພັນຫຼາຍ

11 ທ່າອ່ຽງຂອງທຸລະກິດແມ່ນດີຂື້ນເທື່ອລະກ້າວຖ້າທຽບໃສ່ໃນປີທີ່ຜ່ານມາ

12 ຂໍ້ສະເໜີ

- ດ້າຜູ້ຜະລິດ

  ຢາກໃຫ້ປະຊາຊົນຂະຫຍາຍພື້ນທີ່ປູກໃຫ້ຫຼາຍກວ່າເກົ່າຍ້ອນວ່າທາງບໍລິສັດແມ່ນຕ້ອງການຕະຫຼອດປີຖ້າປະຊາຊົນຜະລິດໄດ້ແມ່ນຕະຫຼອດປີແມ່ນຈະເກັບຊື້ຕະຫຼອດ

- ດ້ານລັດຖະບານ

  ແມ່ນຢາກໃຫ້ຫຼຸດຜ່ອນຄ່າພາສີລົງອີກ ຍ້ອນວ່ານອກຈາກການເສຍຄ່າພາສີແລ້ວຍັງໄດ້ເສຍຄ່າສິນເປືອງອື່ນໆອີກ.

ຂໍ້ມູນສຳພາດພໍ່ຄ້າ (ທ ຢ້າວ)

1 ຊື່ ທ ນິກ ບ້ານກອກຫວານ ເບີໂທ: 5172323

2 ຂັ້ນຕອນດຳເນີນທຸລະກິດ,

ກ່ອນຈະຮອດລະດູການເກັບກູ້ຜົນຜະລິດແມ່ນໄດ້ໄປສະເໜີຊື່ໃຫ້ເມືອງເພື່ອຂື້ນທະບຽນເສຍພາສີໃຫ້ເມືອງໝົດປີແມ່ນ 3.000.000ກີບ. ແລ້ວຈະບໍ່ໄດ້ຄ່າອື້ນໆອີກນອກຈາກຄ່າເຄືອນຍ້າຍສິນໃຫ້ການຄ້າ10.000ກີບ/ ຖົງເທົ່ານັ້ນ.ການດຳເນີນທຸລະກິດແມ່ນແມ່ນປະຕິບັດໄດ້5-6 ປີແລ້ວ.

3 ເຄື່ອງປ່າຂອງດົງທີ່ເກັບຊື່ໃນເຂດເມືອງໂພນໄຊ

| ຜະລິດຕະພັນ | ຈຳນວນ | ລາຄາຊື້ | ເຂດທີ່ເກັບ |
|---|---|---|---|
| ແຂມ | 10ໂຕນ | 3.000 ກີບ/Kg | ສິບເຈັ້ຍຂື້ນໄປເຂດຫ້ວຍທາ |
| ບໍສາ | 10ໂຕນ | 3.000 ກີບ/Kg | ສິບເຈັ້ຍຂື້ນໄປເຂດຫ້ວຍທາ |
| ຫົວດຸກເດືອ | 500 Kg | 4.000 ກີບ/Kg | ສິບເຈັ້ຍຂື້ນໄປເຂດຫ້ວຍທາ |
| ເປືອກເມືອກ | 1ໂຕນ | 4000 ກີບ/Kg | ສິບເຈັ້ຍຂື້ນໄປເຂດຫ້ວຍທາ |
| ສາມທາງ | 500 Kg | 500 ກີບ/Kg | ສິບເຈັ້ຍຂື້ນໄປເຂດຫ້ວຍທາ |

ນອກຈາກເຄື່ອງປ່າຂອງດົງແລ້ວຍັງໄດ້ເກັບຊື້ພືດກະສິກຳນຳອີກເຊັ່ນ: ເຂົ້າ, ສາລີ, ໝາກງາ ແລະ ໝາກເດືອຍ ການເກັບຊື້ສາແມ່ນອີງຕາມຄຸນະພາບຂອງສາຄື ສາງາມຊື້ 3.000 ກີບ/Kg, ສາບໍ່ງາມ 2800 ກີບ/Kg

4 ການສົ່ງຂາຍສິນຄ້າແມ່ນສົ່ງໃຫ້ບໍລິສັດຄື:

- ນ. ບາງ ທີ່ບ້ານ ໂພສີ ແມ່ນເປັນຂາປະຈຳ
- ທ. ບຸນເພັງ ບ້ານດອນ ແມ່ນເປັນຄັ້ງຄາວ

ການຂາຍສິນຄ້າແມ່ນສົ່ງເປັນວັດຖຸດິບ, ລາຄາຂາຍ ແຂມແມ່ນ 3500ກີບ/Kg, ບໍສາແມ່ນຂາຍເປັນລາຄາດຽວ(ງາມ, ບໍ່ງາມ)3500ກີບ/Kg ສຳລັບແຂມແມ່ນຮູ້ວ່າເຂົາເຈົ້ານຳໄປເຮັດຢູກວດເຮືອນ ແລະ ຜ້າຣິມ, ສ່ວນບໍສາ ແມ່ນເອົາໄປເຮັດເຈ້ຍສາ, ກະເບື້ອງ

5 ຄ່າໃຊ້ຈ່າຍ

- ຄ່າຂົນສົ່ງ 600.000ກີບ
- ຈ້າງກຳມະກອນ 100.000ກີບ
- ສິນເບືອອື້ນໆ 200.000ກີບ
- ເສຍຄ່າເຄືອນຍ້າຍສິນຄ້າ 10.000ກີບ/ ຖົງ
- ເສຍຄ່າພາສີ 3.000.000ກີບ/ ປີ/ 30ເທື່ອ

6 ຜົນກຳໄລ່ທີ່ໄດ້ຈາກເກັບຊື້ ແຂມ ແລະ ບໍສາ ສະເລ່ຍແລ້ວປະມານ 200ກີບ/ ກິໂລ

7 ຄຸນນະພາບຂອງຜະລິດຕະພັນທີ່ເກັບຊື້

- ປໍສາ ແມ່ນຈະໄດ້ມີການຄັດເລືອນຄື: ລອກເປືອກໃຫ້ລ້ອນ, ຕາກແດດໃຫ້ແຫ້ງດີ, ງາມເກັບຊື້ ລາຄາ 3.000ກີບ/ ກິໂລ, ປໍສາບໍ່ງາມ(ແດງ,ລອກບໍ່ລ້ອນ)ລາຄາ 2.800ກີບ/ ກິໂລາ
- ແຂມ ຫັກກ້ານໃຫ້ສັ້ນ, ຟາດດອກໃຫ້ລ້ອນ, ຕາກໃຫ້ແຫ້ງດີ, ບໍ່ໃຫ້ລົນໄຟ

8 ຂັ້ນຕອນການຜະລິດ ຄວນປັບປຸງດ້ານຄຸນະພາບອີກເຊັ່ນ: ຕາກໃຫ້ແຫ້ງດີກວ່າເກົ່າ(ແຂມ, ປໍສາ), ຫັກກ້ານໃຫ້ສັ້ນ(ແຂມ)

9 ການດຳເນີນທຸລະກິດແມ່ນບໍ່ມີບັນຫາຍັງ

- ຊັບພະຍາກອນແມ່ນພຽງບໍກັບຄວາມຕ້ອງການຂອງຕະຫຼາດ

10 ແຜນທີ່ຈະພັດທະນາທຸລະກິດແມ່ນຄິດວ່າໃນປີຕໍ່ໄປຈະຂະຫຍາຍອອກໄປເລືອຍໆ

11 ທ່າອ່ຽງຂອງທຸລະກິດແມ່ນດີຂື້ນເທື່ອລະກ້າວຖ້າທຽບໃສ່ໃນປີທີ່ຜ່ານມາ

12 ຂໍ້ສະເໜີ

- ດ້ານຜູ້ຜະລິດ

  ຢາກໃຫ້ປະຊາຊົນຂະຫຍາຍພື້ນທີ່ປູກໃຫ້ຫຼາຍກວ່າເກົ່າຍ້ອນວ່າທາງບໍລິສັດແມ່ນຕ້ອງການຕະຫຼອດປີຖ້າປະຊາຊົນຜະລິດໄດ້ແມ່ນຕະຫຼອດປີແມ່ນຈະເກັບຊື້ຕະຫຼອດ

- ດ້ານລັດຖະບານ

  ແມ່ນຢາກໃຫ້ຫຼຸດຜ່ອນຄ່າພາສີລົງອີກ ຍ້ອນວ່ານອກຈາກການເສຍຄ່າພາສີແລ້ວຍັງໄດ້ເສຍຄ່າສິນເບືອອື່ນໆອີກ.

ສັງລວມຂໍ້ມູນສຳພາດພໍ່ຄ້າກຸ່ມກອກຫວານ

(ກິແກ້ວ, ສົມບຸນ, ໄຊຍະສິດ, ພອນທິບ)

1.ຈຳນວນຜະລິດຕະພັນທີ່ເກັບຊື້ເຂດເມືອງໂພນໄຊ

- ແຂມ 24 ໂຕ່ນ
- ປໍສາ 28 ໂຕ່ນ

ຜະລິດຕະພັນທີ່ເກັບຊື້ ລາຄາແມ່ນ 3.000ກີບ/ ກິໂລ(ແຂມ, ປໍສາ) ການເກັບຊື້ຂອງແມ່ຄ້າກອກຫວານແມ່ນເຖິງລະດູການເກັບກູ້ຜົນຜະລິດແລ້ວຈະໄປວາງເງິນໃຫ້ແມ່ຄ້າຢູ່ບ້ານເປັນຜູ້ເກັບຊື້ໃຫ້ເພື່ອສະດວກໃນການທ້ອນໂຮມສິນຄ້າຜູ້ລະ 1.000 .000 ກີບ/ ຄົນສ່ວນລາຄາແມ່ນຂຶ້ນ, ລົງແມ່ນຂຶ້ນກັບບໍລິສັດ, ແມ່ທີ່ເກັບຊື້ຢູ່ແຕ່ລະບ້ານມີຄື:

   - ບ້ານນ້ຳບໍ່ ແມ່ນ ທ ແຜງ, ບ້ານ ປຸງເປົ້າແມ່ນ ນ. ໂມະ

2. ການຂົນສົ່ງສິນຄ້າ

ແມ່ນເກັບຊື້ອອກຈາກບ້ານແລ້ວສົ່ງບໍລິສັດເລີຍຈະບໍ່ໄດ້ມີການຈຳແນກເກດ ຫຼື ວ່າປຸ່ງແຕ່ງໃດໆລາຄາທີ່ສົ່ງຂາຍ, ແຂມ ແລະ ປໍສາ ແມ່ນລາຄາດຽວກັນຄື: 3.500ກີບ/ ກິໂລ, ບໍລິສັດທີ່ແມ່ຄ້າທາງກອກຫວານເອົາໄປສົ່ງແມ່ນຈະເປັນສາຂາປະຈຳຂອງໃຜລາວແຕ່ວ່າບໍ່ໄດ້ມີການເຊັ່ນສັນຍາໃດໆກັນເຊັ່ນ:

- ສາຂາທ້າວຢ້າວແມ່ນ ບໍລິສັດນາງ ບາງ ແລະ ທ້າວບຸນເພັງ
- ສາຂາຂອງທ້າວພຸດ ແລະ ທ້າວນິກແມ່ນ ແມ່ມະນີວອນ, ທ້າວຊຽງເພັງບ້ານຄຶກວາ, ນາງນ້ອຍແຄມຂອງ, ນາງ.ແສງຈັນ ບ້ານ ດອນຈໍ, ທ້າວເຂັ້ມຄຳ ຄົວລົດສາຍເໜືອ

ຂໍ້ມູນຂອງຜະລິດຕະພັນທີ່ເກັບຊື້ແລ້ວສົ່ງຂາຍແມ່ນມີຂໍ້ມູນພຽງເລັກນ້ອຍຄື: ແຂມແມ່ນເອົາໄປເຮັດຢູກວດ, ເຮັດຜ້າຮົມ, ປໍສາແມ່ນ ຜະລິດເປັນເຈ້ຍເຮັດປຶ້ມຂຽນ,ກະເບື້ອງມຸງເຮືອນ

3.ການສິ້ນເປືອງ ແລະ ຄ່າໃຊ້ຈ່າຍຕ່າງໆ

- ການເສຍພາສີຂອງແມ່ຄ້າກຸ່ມກອກຫວານແມ່ນຕ່າງກັນຄື:

- ທ້າວຢ້າວແມ່ນ ໄດ້ເສຍພັນລະໃຫ້ເມືອງໝົດປີບາດດຽວ3.000.000ກີບ/ ປີແລ້ວຈະບໍ່ໄດ້ເສຍຄ່າອາກອນອື່ນໆອີກພຽງ ແຕ່ຕ້ອງໄດ້ເສຍຄ່າເຄື່ອນຍ້າຍສິນຄ້າໃຫ້ການຄ້າຢູ່ດ້ານນ້ຳບໍ່10.000ກີບ/ ຖ້ຽວ

- ທ້າວພຸດ, ທ້າວນິກການເສຍພາສີຂອງເຂົ້າເຈົ້າແມ່ນເສຍເທື່ອລະຖ້ຽວແມ່ນຈະເສຍຕາມນ້ຳໜັກຂອງສິນຄ້າ100.000ກີບ/ ໂຕ່ນ, ເສຍໃຫ້ການຄ້າເງິນ5%, ກະສິກຳ3% ແລະ ການຄ້າ10.000ກີບ/ ຖ້ຽວ.

- ການລົງທືນ

- ທ້າວຢ້າວລວມມີຄ່າຂົນສົ່ງ 600.000 ກີບ/ຖ້ຽວ, ຈ້າງກຳມະກອນ100.000 ກີບ/ຖ້ຽວ ,ຄ່າເຄື່ອນຍ້າຍສິນຄ້າ10.000 ກີບ/ຖ້ຽວ,ຄ່າສິ້ນເປືອງອື່ນໆ200.000ກີບ/ຖ້ຽວ,

- ທ້າວພຸດ ແລະທ້າວນິກ ໃສ່ນ້ຳມັນລົດ100.000 ກີບ/ ຖ້ຽວ, ເສຍພາສີຢູ່ດ້ານຫວ້ຍມັນ, ຄ່າສິ້ນເປືອງ ອື່ນໆແມ່ນ100.000 ກີບ/ ຖ້ຽວ

4. ຜົນກຳໄລ

ການຊື້ຂາຍປໍສາ ແລະ ແຂມເມື່ອມາໄລ່ລຽງເສດຖະກິດແລ້ວຈະມີຜົນກຳໄລຢູ່200-300ກີບ/ ກິໂລ

5. ການປະເມີນ ລາຍຮັບລາຍຈ່າຍ ຂອງປໍສາ ແລະ ແຂມ




| | | | |
|---|---|---|---|
| ລາຄາ: | 3.000 | 3.200 | 3.500 |
| ຜົນກຳໄລ: | 3.000 | 200 | 100 |
| ເປີເຊັນ: | 85.7% | 5.7% | 2.8% |

5. ບັນຫາ

ການດຳເນີນທຸລະກິດແມ່ນບໍ່ມີບັນຫາຫຍັງບໍ່ວ່າຈະເປັນຕົ້ນທຶນ ຫຼື ການວາງເງິນໃຫ້ແມ່ຄ້າທ້ອງຖິ່ນ, ຈະມີບັນຫາກໍ່ແມ່ນເລື່ອງຊັບພະຍາກອນບໍ່ພຽງພໍກັບຄວາມຕ້ອງການຂອງຕະຫຼາດ, ຄຸນະພາບຂອງຜະລິດຕະພັນເຊັ່ນຍາມຝົນຈະເຮັດໃຫ້ສິນຄ້າຕົກໂໝກຍ້ອນບໍ່ມີແດດຕາກ.

6. ຂໍ້ສະເໜີ

- ດ້ານຜູ້ຜະລິດ: ..

ຢາກໃຫ້ປະຊາຊົນຂະຫຍາຍພື້ນທີ່ປູກປໍສາ ແລະ ແຂມອອກອີກ ເພື່ອໃຫ້ມີສິນຄ້າ ຕອບສະ ໜອງ ຕາມຄວາມຕ້ອງການຂອງຕະຫຼາດ

- ດ້ານລັດຖະບານ:

ຢາກໃຫ້ທາງຂັ້ນລຸດຜ່ອນການເສຍພາສີລົງຖ້າຫຽບໃສ່ເມືອງອື່ນແມ່ນ ສູງ.

*ສຳພາດບໍລິສັດ ນາງ ນ້ອຍ*

- ຊື່ບໍລິສັດ: ພັດທະນາພືດຜົນການກະເສດ
- ຊື່: ນາງ ອຳພອນ ສຸໄພບຸນ ບ້ານ ເມືອງງາ ເບີໂທ: 071 252 942
- ເສຍຄ່າປະຕັງຂໍອານຸຍາດດຳເນີນທຸລະກິດ, ໃບປະຕັງຊາຍແດນ, ເຊັນສັນຍາກັບຝ່າຍເກັບຊື້ (ໄທ)
- ຕັ້ງບໍລິສັດໃນປີ 1999-2007
- ເລີ້ມເກັບຊື້ເຄື່ອງປ່າຂອງດົງ  ໃນປີ 2006
  - ແຂມ : 100 ໂຕ່ນ, ລາຄາ 3500-4000 ກີບ/ກິໂລ, ຂາຍເປັນວັດຖຸດິບສົ່ງໃຫ້ໄທລາຄາ 19 B/ກິໂລ
  - ປໍສາ : 100 ໂຕ່ນ, ລາຄາ 3500-3800 ກີບ/ກິໂລ, ຂາຍ ເປັນວັດຖຸດິບສົ່ງໃຫ້ໄທລາຄາ 17 B /ກິໂລ, ຂາຍຕໍ່ ໃຫ້ບໍລິສັດ ພາຍໃນຫຼວງພະບາງ 4000 ກີບ/ກິໂລ
- ຜະລິດຕະພັນເຄື່ອງປ່າຂອງດົງດັ່ງກ່າວສ່ວນຫຼາຍແມ່ນນຳມາຈາກເມືອງເຊັ່ນ : ເມືອງນ້ຳບາກ, ປາກແຊງ, ພູຄູນ, ຊຽງເງິນ, ໂພນໄຊ, ສາຂາທີ່ບໍລິສັດປ່ອຍເງິນໃຫ້ ເກັບຊື້ມີ 2 ເມືອງຄື : ເມືອງງອຍ ແລະ ນ້ຳຖ້ວມ
- ກຳໄລທີ່ໄດ້ຈາກການຂາຍປໍສາສຳເລັດຮູບແມ່ນ 1kg= 590 ກີບ
- ຄຸນນະພາບຜະລິດຕະພັນການເກັບຊື້ແມ່ນຈະເນັ້ນ ເລືອກ ຄຸນນະພາບປໍສາຕ້ອງ ຕາກ ໃຫ້ ແຫ້ງບໍ່ຕິກໂໝກ
- ບັນຫາໃນການດຳເນີນທຸລະກິດແມ່ນລາຄາສິນຄ້າບໍ່ຄົງທີ່,ເນື່ອງຈາກວ່າອັດຕາເງິນບາດບໍ່ຄົງທີ່ມີ ບາງຄັ້ງ ກໍ່ລຸບທືນ
- ແຜນທີ່ຈະພັດທະນາທຸລະກິດແມ່ນຄິດວ່າຈະສືບຕໍ່ເກັບຊື້ຕໍ່ໄປເລື້ອຍໆ ແລະ ຂະຫຍາຍກິດຈະການ ອອກອີກ

ຂໍ້ມູນສຳພາດບໍລິສັດສາຍນ້ຳຄານ

- ຊື່: ທ້າວ ເພັດລາມາ ເບີໂທ 2133331, ທີ່ຢູ່ ບ້ານ ຫົວຊຽງ
- ຂັ້ນຕອນໃນການດຳເນີນທຸລະກິດ:

  ກ່ອນຈະດຳເນີນທຸລະກິດແມ່ນໄດ້ເຮັດບົດວິພາກເສດຖະກິດສະເໜີພະແນກແຜນການການຮ່ວມມື ແລະ ການລົງທຶນຂອງແຂວງຫຼວງພະບາງ, ຫຼັງຈາກນັ້ນເຂົາເຈົ້າກໍ່ໄດ້ເຮັດຖະບຽນການເກັບຊື້ໃຫ້ບໍລິສັດ ຈາກນັ້ນ ບໍລິສັດກໍ່ໄດ້ໄປຜ່ານພະແນກການຄ້າເສຍອາກອນ 30% , ພະແນກກະສິກຳ ແລະ ປ່າໄມ້, ພະແນກການ ຄ້າໃຫ້ຂຶ້ນ ທະບຽນການເກັບຊື້ໃຫ້
- ເຄື່ອງປ່າຂອງດົງທີ່ໄດ້ເກັບຊື້ ແມ່ນຊື້ແຕ່ຜະລິດຕະພັນປໍສາ:

  ຜະລິດຕະພັນ ຈຳນວນ ລາຄາຊື້

  ປຸງແຕ່ງສຳເລັດຮູບຂາຍ (ເຈັ້ຍສາ)

  ປໍສາ 100 T 4000 ກີບ/Kg + ເສຍຄ່າປຸງແຕ່ງ 4000ກີບ/Kg

  25000 ກີບ/ Kg

  - ກຳໄລທີ່ໄດ້ຈາກການຂາຍປໍສາສຳເລັດຮູບແມ່ນ 1kg= 17,000 ກີບ
  - ຄຸນນະພາບຜະລິດຕະພັນການເກັບຊື້ແມ່ນບໍ່ຈຳແນກສາອ່ອນສາແກ່ເກັບໝົດທຸກປະເພດ, ແຕ່ຈະເນັ້ນ ເລືອກ ຄຸນນະພາບປໍສາຕ້ອງຕາກໃຫ້ແຫ້ງບໍ່ຕິກໂໝກ
- ບັນຫາໃນການດຳເນີນທຸລະກິດແມ່ນເລື້ອງການຕະຫຼາດໄທເຊັ່ນ: ເສຍພາສີຫຼາຍໂພດ 10% ຂອງມູນຄ່າ ສິນຄ້າ, ລູກຄ້າໄທຕິດໜີ້, ຍັງບໍ່ທັນເຂົ້າເຖິງຕະຫຼາດສາກົນ ( ຍີ່ປຸ່ນ, ເກົາຫຼີ...)ສິນຄ້າທີ່ສົ່ງອອກຂາຍຕ້ອງໄດ້ ຜ່ານຕະຫຼາດໄທ, ດັ່ງນັ້ນ, ສິນຄ້າຈຶ່ງຜະລິດຂາຍແຕ່ຢູ່ພາຍໃນປະເທດເຊັ່ນ: ຮ້ານຫັດຖະກຳຂະໜາດ ນ້ອຍ ຫຼາຍໆຮ້ານຢູ່ພາຍໃນແຂວງ ຫຼວງພະບາງເກືອບວ່າ 90% ທີ່ໄດ້ຊົມໃຊ້ເຈັ້ຍປໍສາຂອງບໍລິສັດເພັດລາມາ
- ຊັບພະຍາກອນແມ່ນພຽງບໍ່ກັບຄວາມຕ້ອງການຂອງຕະຫຼາດ
- ແຜນທີ່ຈະພັດທະນາທຸລະກິດແມ່ນຄິດວ່າໃນປີຕໍ່ໄປຈະຂະຫຍາຍອອກອີກ, ຖ້າປະຊາຊົນມີຜະລິດຕະ ພັນຫຼາຍ
- ທ່າອ່ຽງຂອງທຸລະກິດແມ່ນດີຂຶ້ນເທື່ອລະກ້າວຖ້າທຽບໃສ່ໃນປີທີ່ຜ່ານມາ

- ຂໍ້ສະເໜີ

1. ຢາກໃຫ້ສົ່ງເສີມໃຫ້ຊາວກະສິກອນປູກປໍສາແຄມນ້ຳເພື່ອສະດວກໃນການຕົ້ມປໍສາກັບບ່ອນ, ເພື່ອເຮັດໃຫ້ ຊາວກະສິກອນໄດ້ລາຄາຈາກການຂາຍປໍສາສູງຂຶ້ນ ແລະ ຫຼີກລ້ຽງພໍ່ຄ້າມີການເຂົ້າມາກົດລາຄາເລື້ອງຄຸນນະ ພາບຂອງປໍສາ

ແຜນວາດຂອງຕ່ອງໂສ້ການຕະຫຼາດ

